ຮັບຊາບ.
ໃຫ້ສືບຕໍ່ຕິດຕາມ.
16/2 2015

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
----=====000=====----

ສຳນັກງານ ຄຄຊ
ພະແນກຄຸ້ມຄອງຕະຫຼາດຫຼັກຊັບ

ນະຄອນຫຼວງວຽງຈັນ, ວັນທີ 16 ກຸມພາ 2015

ຮຽນ: ທ່ານ ຫົວໜ້າສຳນັກງານ ຄຄຊ ທີ່ນັບຖື,
(ໂດຍຜ່ານ ຄຳເຫັນຂອງ ທ່ານ ສຸລິສັກ ທຳມະວົງ ຮອງຫົວໜ້າສຳນັກງານ ຄຄຊ)
ເລື່ອງ: ລາຍງານກ່ຽວກັບການຊື້-ຂາຍຮຸ້ນ EDL-GEN ໃນວັນທີ 13 ກຸມພາ 2015 ຢ່າງລະອຽດ.

- ອີງຕາມຜົນການຊື້-ຂາຍຮຸ້ນ EDL-GEN ໃນວັນທີ 16 ກຸມພາ 2015;
- ອີງຕາມທິດຊີ້ນຳຂອງ ທ່ານ ຮອງຫົວໜ້າ ພະແນກ ຄຸ້ມຄອງຕະຫຼາດຫຼັກຊັບ ຄັ້ງວັນທີ 16 ກຸມພາ 2015,

ພະແນກຄຸ້ມຄອງຕະຫຼາດຫຼັກຊັບ ຂໍຮຽນລາຍງານມາຍັງທ່ານຊາບວ່າ: ການຊື້-ຂາຍຮຸ້ນ EDL-GEN ໃນວັນທີ 16 ກຸມພາ 2015 ໄດ້ມີການຊື້-ຂາຍ 120.836 ຮຸ້ນ, ຄິດເປັນມູນຄ່າ 855,38 ລ້ານກີບ ເຊິ່ງເປັນມູນຄ່າການຊື້-ຂາຍທີ່ເປັນຈຳນວນຫຼາຍເມື່ອທຽບໃສ່ການຊື້-ຂາຍຮຸ້ນດັ່ງກ່າວໃນມື້ທີ່ຜ່ານມາ, ທາງພະແນກໄດ້ຊອກຮູ້ຂໍ້ມູນຄືນ ແລະ ຜ່ານການຄົ້ນຄ້ວາ ຂໍ້ມູນເພີ່ມເຕີມຂອງຜູ້ລົງທຶນທີ່ເຂົ້າມາຊື້-ຂາຍຮຸ້ນ EDL-GEN ໃນວັນດັ່ງກ່າວ ຜົນປາກົດວ່າແມ່ນ ການເຄື່ອນໄຫວຂອງຜູ້ລົງທຶນ ປະເພດ ບຸກຄົນ ຈາກປະເທດໄທ ບັນຊີເລກທີ 1595 ເຊິ່ງເປັນເລກບັນຊີຂອງ SA-NGA Tangchansiri ໄດ້ເທຂາຍຮຸ້ນຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ( EDL-GEN ) ໃນລາຄາ 7.100 ກີບ ຊຶ່ງເປັນລາຄາທີ່ເພີ່ມຂຶ້ນ 150 ກີບ ເມື່ອທຽບໃສ່ລາຄາປິດມື້ທີຜ່ານມາ, ເປັນຈຳນວນ 99.898 ຮຸ້ນ ແລະ ມີມູນຄ່າ 709,27 ລ້ານກີບ, ໂດຍເປັນການຊື້ຮຸ້ນ ຂອງຜູ້ລົງທຶນ ປະເພດ ບຸກຄົນ ຈາກປະເທດໄທ ເລກບັນຊີ 3155 ເຊິ່ງເປັນເລກບັນຊີຂອງ SUB LT Nattaya Thittan ເຊິ່ງຊື້ຮຸ້ນ ໃນລາຄາ 6.900, 7.000 ແລະ 7.100 ກີບ ເປັນຈຳນວນ 119.500 ຮຸ້ນ ແລະ ມີມູນຄ່າ 846,09 ລ້ານກີບ ກວມເອົາ 71,26% ຂອງມູນຄ່າການຊື້-ຂາຍທັງໝົດໃນມື້ດັ່ງກ່າວ.

ການເຄື່ອນໄຫວຊື້-ຂາຍຮຸ້ນຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-GEN) ຂອງ 2 ເລກບັນຊີດັ່ງກ່າວ ໃນໄລຍະ 1 ເດືອນທີ່ຜ່ານມາມີດັ່ງນີ້:

| ວັນທີ | ເລກບັນຊີ | ຊື້ | ຂາຍ | ຈຳນວນຮຸ້ນ | ມູນຄ່າເປັນກີບ |
|---|---|---|---|---|---|
| ວັນທີ 5 ມັງກອນ 2015 | 1595 | | ✓ | 2.213 | 37.012.300 |
| ວັນທີ 22 ມັງກອນ 2015 | 1595 | | ✓ | 133.245 | 946.039.500 |
| ວັນທີ 13 ກຸມພາ 2015 | 1595 | | ✓ | 99.898 | 709.275.800 |
| ວັນທີ 13 ກຸມພາ 2015 | 3155 | ✓ | | 119.500 | 846.099.500 |

ໃນວັນທີ 16 ກຸມພາ 2015 ທັງ 2 ບັນຊີດັ່ງກ່າວ ບໍ່ໄດ້ເຄື່ອນໄຫວຊື້-ຂາຍ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຫ້ທິດຊີ້ນຳຕາມທາງຄວນດ້ວຍ.

Ms. ... ສືບຕໍ່ຕິດຕາມ ເຄື່ອນໄຫວ ຂອງ 2 ບັນຊີດັ່ງກ່າວ ...

(ຮອງ) ຫົວໜ້າພະແນກຄຸ້ມຄອງຕະຫຼາດຫຼັກຊັບ